**ສະຖານທູດສະຫະລັດອາເມລິກາໄດ້ໃຫ້ຄວາມຊ່ວຍເຫຼືອ**
**ຜູ້ປະສົບໄພນ້ຳຖ້ວມຈາກພະຍຸເກດສະໜາ**

ສະຖານທູດສະຫະລັດອາເມລິກາ ມີຄວາມຍິນດີ ທີ່ໄດ້ ບໍລິຈາກ ເງິນຈຳນວນ 50 000 US$ (ຫ້າສິບພັນໂດລາສະຫະລັດ)ໃຫ້ແກ່ສະພາກາແດງລາວ ໃນການບັນເທົາຄວາມເດືອດຮ້ອນໃຫ້ແຂວງທີ່ປະສົບໄພນ້ຳຖ້ວມ ເຊັ່ນແຂວງເຊກອງ, ແຂວງສາລະວັນ, ແລະແຂວງອັດຕະປື.

ພະຍຸເຂດຮ້ອນ ເກດສະໜາໄດ້ກໍ່ໃຫ້ເກີດໄພນ້ຳຖ້ວມແລະໄດ້ສ້າງຄວາມເສຍຫາຍໃຫ້ບ້ານເຮືອນຫຼາຍຫຼັງ ແລະດິນປູກຝັງໃນພາກໃຕ້ຂອງລາວ. ຜູ້ທີ່ຖືກປະສົບໄພນ້ຳຖ້ວມ ຕ້ອງການຄວາມຊ່ວຍເຫຼືອທາງດ້ານສະບຽງອາຫານ, ນ້ຳ, ແລະທີ່ຢູ່ອາໃສ ລວມທັງ ການຊ່ວຍເຫຼືອໃນການສ້ອມແຊມອາຄານຕ່າງໆທີ່ຖືກເປເພ, ໂຄງສ້າງພື້ນຖານ, ແລະທີ່ດິນປູກຝັງ. ສະຖານທູດສະຫະລັດອາເມລິກາ ຮ່ວມກັບສະພາກາແດງລາວ ສືບຕໍ່ຊ່ວຍເຫຼືອໃນການບັນເທົາ ຄວາມເດືອດຮ້ອນຢູ່ໃນພາກໃຕ້ຂອງລາວ ແລະຈະສືບຕໍ່ຕິດຕາມເຫດການໃນເຂດພູມມິພາກນັ້ນ.